multicultural health communication

NSW GOVERNMENT Health

Lao
[DOH-7180]

# ການຕິດເຊື້ອວໍ້ ແລະ Lyssavirus ຈາກເຈຍ

## Rabies and Bat Lyssavirus Infection

### Lyssavirus ແມ່ນຫຍັງ?

Lyssaviruses ແມ່ນເຊື້ອໄວຣັສກຸ່ມນຶ່ງຊຶ່ງຮວມມີເຊື້ອວໍ້ແລະ lyssavirus ຈາກເຈຍ. ໂຣກວໍ້ແມ່ນການຕິດເຊື້ອໃນກຸ່ມຂອງສັດລ້ຽງລູກດ້ວຍນ້ຳນົມທີ່ກັດແລະຂູດ. ໃນຂະນະທີ່ໂຣກນີ້ມີຢູ່ຕາມຫຼາຍໆພາກສ່ວນຂອງໂລກ, ແຕ່ໂຣກນີ້ບໍ່ມີຢູ່ໃນອອສເຕຣເລັຍ. ການຕິດເຊື້ອວໍ້ສາມາດເຮັດໃຫ້ສັດເຈັບແລະຕາຍໄດ້, ແລະສ່ວນຫຼາຍເມື່ອຄົນຕິດເຊື້ອນີ້ ກໍຕາຍເຊັ່ນກັນ.

Lyssaviruses ຈາກເຈຍແມ່ນເຊື້ອໄວຣັສຊນິດນຶ່ງຊຶ່ງກ່ຽວຂ້ອງກັນ, ແຕ່ວ່າແຕກຕ່າງກັນກັບເຊື້ອວໍ້. ໃນອອສເຕຣເລັຍ ເຊື້ອໄວຣັສນີ້ຈະມີຢູ່ໃນໂຕຂອງເຈຍ. ນ້ອຍນັກນ້ອຍໜາທີ່ມັນຈະຕິດຄົນ. ເທົ່າທີ່ຜ່ານມາ ມີລາຍງານແຕ່ພຽງສອງກໍຣະນີຂອງຄົນຕິດເຊື້ອ lyssavirus ຈາກເຈຍໃນອອສເຕຣເລັຍ, ແລະທັງສອງກໍຣະນີແມ່ນເກີດຂຶ້ນທີ່ Queensland ໃນກາງປີ 1990. ທັງສອງຄົນດັ່ງກ່າວໄດ້ເສັຍຊີວິດ.

### ອາການມີຫຍັງແດ່?

ເປັນທີ່ເຊື່ອກັນວ່າ ໂຣກວໍ້ແລະ lyssavirus ຈາກເຈຍ ມີອາການຄ້າຍຄຽງກັນ. ອາການດັ່ງກ່າວຮວມມີເຊັ່ນ ເຈັບຫົວ, ຄີງຮ້ອນ, ຮູ້ສຶກບໍ່ສະບາຍ, ປະສາດຄວາມຮູ້ສຶກບໍຣິເວນຖືກກັດຫຼືຂູດມີການປ່ຽນແປງ, ກະວົນກະວາຍ, ລັງກຽດອາກາດສົດແລະນ້ຳ, ອ່ອນເພັຍ, ເພີ້ຄຸ້ມຄັ່ງ, ຊັກ, ແລະໝົດສະຕິ. ສ່ວນຫຼາຍຈະເສັຍຊີວິດຫຼາຍມື້ຕໍ່ມາຫຼັງຈາກອາການເລີ້ມອອກ.

### ໂຣກນີ້ແຜ່ຜາຍຢ່າງໃດ?

ທັງໂຣກວໍ້ແລະ lyssavirus ຈາກເຈຍແຜ່ຜາຍຈາກສັດລ້ຽງລູກດ້ວຍນ້ຳນົມທີ່ຕິດເຊື້ອ ໄປຫາຄົນຫຼືສັດລ້ຽງລູກດ້ວຍນ້ຳນົມຕົວອື່ນໆ ໂດຍຜ່ານຮອຍກັດແລະຂູດ. ການກັດແລະຂູດ ສາມາດສົດເຊື້ອໄວຣັສ - ຊຶ່ງມີຢູ່ໃນນ້ຳລາຍສັດ - ເຂົ້າໄປສູ່ຮ່າງກາຍຂອງຄົນທີ່ຖືກກັດ.

ຢູ່ຕ່າງປະເທດ, ສັດລ້ຽງລູກດ້ວຍນ້ຳນົມທີ່ຖືເຊື້ອໂຣກວໍ້ໃນໂຕມີ: ເຈຍ, ໝາ, ແມວ, ຣັກກູນ, ສະກັ້ງ, ລີງ, ແລະ ສັດລ້ຽງລູກດ້ວຍນ້ຳນົມຊນິດອື່ນໆທີ່ສາມາດກັດແລະຂູດໄດ້. ສັດລ້ຽງລູກດ້ວຍນ້ຳນົມຢູ່ໃນອອສເຕຣເລັຍບໍ່ຖືເຊື້ອນີ້ຢູ່ໃນໂຕ. ໃນອອສເຕຣເລັຍ, ມີແຕ່ເຈຍເທົ່ານັ້ນ - ທັງສອງຊນິດຄືຊນິດໂຕໃຫຍ່ flying foxes (ຫຼື fruit bats) ແລະຊນິດໂຕນ້ອຍກວ່າ insectivorous (ຫຼື micro) bats - ທີ່ພົບວ່າຖືເຊື້ອ bat lyssavirus.

**ແມ່ນໃຜແດ່ມີເປີເຊັນສ່ຽງສູງ?**

ສຳລັບໂຣກວໍ້, ຄົນຢູ່ຕ່າງປະເທດທີ່ໃກ້ຊິດກັບສັດປ່າທີ່ລ້ຽງລູກດ້ວຍນ້ຳນົມທີ່ກັດແລະຄູດໄດ້ - ແລະສັດລ້ຽງລູກດ້ວຍນ້ຳນົມທີ່ລ້ຽງຢູ່ຕາມບ້ານ ທີ່ບໍ່ໄດ້ສັກຢາປ້ອງກັນວໍ້ - ຄົນເຫຼົ່ານີ້ມີເປີເຊັນສ່ຽງຕໍ່ການຕິດເຊື້ອສູງຂຶ້ນ. ຄົນທ້ອງຖິ່ນຢູ່ຕ່າງປະເທດຫຼາຍຄົນໄດ້ຕິດເຊື້ອພຍາດວໍ້ນີ້, ແລະຄົນອອສເຕຣລຽນບາງຄົນທີ່ເດີນທາງຫຼືໄປຢູ່ຕ່າງປະເທດກໍໄດ້ຕິດເຊື້ອພຍາດນີ້ເຊັ່ນກັນ.

ເຂດປອດໂຣກວໍ້ ໃນປີ 2000 ມີ ປະເທດອອສເຕຣເລັຍ, ນິວຊີແລນ, ນິວກີເນັຍ, ຍີ່ປຸ່ນ, ຮາວາຍ, ໄຕ້ຫວັນ, ໂອຊີອານີ, ບາງພາກສ່ວນຂອງຢູໂຣບ, ບາງພາກສ່ວນຂອງແວສອິນດີ້, ແລະເກາະຕ່າງໆໃນເຂດມະຫາສມຸດແອັດແລນຕິກ.

ຢູ່ໃນອອສເຕຣເລັຍ, ຜູ້ທີ່ຈັບຕ້ອງເຈັຍແມ່ນມີເປີເຊັນສ່ຽງຕໍ່ການຕິດເຊື້ອ bat lyssavirus.

**ຈະກວດຫາເຊື້ອໄດ້ຢ່າງໃດແລະຈະປິ່ນປົວວິທີໃດ?**

ການກວດຫາເຊື້ອນັ້ນຫຍຸ້ງຍາກຫຼາຍ, ແລະການຢັ້ງຢືນຕ້ອງໄດ້ກວດຫາເຊື້ອຢູ່ຫ້ອງທົດລອງເພື່ອຫາເຊື້ອໄວຣັສຢູ່ຜິວໜັງ, ໃນເລືອດ, ໄຂສັນຫຼັງ, ແລະ ເຍື່ອເສັ້ນປະສາດ ຫຼື ເນື້ອເຍື່ອບ່ອນອື່ນໆ. ເມື່ອພຍາດເລີ້ມເປັນແລ້ວ ບໍ່ສາມາດປິ່ນປົວໄດ້.

**ຈະປ້ອງກັນໄດ້ຢ່າງໃດ?**

ນອກເສັຍຈາກວ່າເປັນວຽກການຂອງທ່ານ, ແລະທ່ານໄດ້ຮັບການຝຶກຝົນມາແລະໃຊ້ເຄື່ອງມືປ້ອງກັນອັນເໝາະສົມ, ຢ່າພຍາຍາມຈັບບາຍສັດປ່າທີ່ລ້ຽງລູກດ້ວຍນ້ຳນົມ. ເຊື້ອໂຣກ Bat lyssavirus ແລະພຍາດວໍ້ນັ້ນເປັນພຽງເຊື້ອພຍາດສອງຊນິດໃນຫຼາຍໆຊນິດຊຶ່ງສັດສາມາດຖ່າຍທອດເຖິງຄົນໄດ້.

ການລ້າງແຜທີ່ເກີດຂຶ້ນຍ້ອນສັດ, ແລະລ້າງດ້ວຍນ້ຳຢາຂ້າເຊື້ອເຊັ່ນ povidone-iodine ຈະຊ່ວຍປ້ອງກັນການຕິດເຊື້ອໄດ້.

ຢາປ້ອງກັນໂຣກວໍ້ສາມາດປ້ອງກັນການຕິດເຊື້ອໄດ້ທັງພຍາດວໍ້ ແລະ bat lyssavirus. ຄົນທີ່ຈັບບາຍສັດ ຫຼື ໄດ້ຕ້ອງຊູນເຈັຍຢູ່ໃນອອສເຕຣເລັຍ - ຕົວຢ່າງ ຄົນດູແລເຈັຍ, ເຈົ້າໜ້າທີ່ດູແລຊີວິດສັດປ່າ ແລະສັຕວະແພດ; ຫຼືຄົນທີ່ເດີນທາງໄປຕ່າງປະເທດທີ່ມີແຜນວ່າຈະໄດ້ຈັບບາຍສັດລ້ຽງລູກດ້ວຍນ້ຳນົມທີ່ສາມາດກັດແລະຄູດ ທີ່ຍັງບໍ່ໄດ້ຖືກສັກຢາກັນພຍາດ - ຄົນເຫຼົ່ານັ້ນຄວນໄປຮັບການສັກຢາກັນໂຣກ ຈາກໝໍໃນເຂດທ້ອງຖິ່ນຂອງຕົນ. ທ່ານຕ້ອງໄດ້ຈ່າຍເງິນເມື່ອສັກຢານີ້.

ເຖິງແມ່ນວ່າທ່ານຈະບໍ່ໄດ້ສັກຢາກັນມາກ່ອນໜ້ານີ້, ການສັກຢາກັນວໍ້ຫຼັງຈາກຖືກສັດກັດແລ້ວ, ຮວມທັງ ສັກຢາຊນິດນຶ່ງອີກຊຶ່ງເອີ້ນວ່າ rabies immunoglobulin ກໍຍັງຈະສາມາດຊ່ວຍປ້ອງກັນການຕິດເຊື້ອໄດ້ຖ້າຫາກວ່າສັກທັນ ຫຼັງຈາກຖືກກັດຫຼືຄູດ.

- ຖ້າທ່ານຖືກເຈ້ຍກັດຫຼືຄູດຢູ່ໃນອອສເຕຣເລັຍ, ຫຼືຖືກກັດຈາກສັດປ່າທີ່ລ້ຽງລູກດ້ວຍນ້ຳນົມ (ຫຼືສັດທຸກໆຢ່າງທີ່ບໍ່ໄດ້ສັກຢາປ້ອງກັນ) ທີ່ຕ່າງປະເທດ:
- ໃຫ້ລ້າງແຜດ້ວຍສະບູແລະນ້ຳທັນທີທັນໃດ
- ໃຫ້ເຊັດດ້ວຍນ້ຳຢາຂ້າເຊື້ອ
- ໃຫ້ໄປຫາໝໍເພື່ອໃຫ້ເພິ່ນດູແລບາດແຜໂດຍໄວທີ່ສຸດເທົ່າທີ່ຈະໄວໄດ້, ແລະໃຫ້ເພິ່ນລົງຄວາມເຫັນວ່າທ່ານອາດຈະສ່ຽງຕໍ່ການຕິດເຊື້ອຫຼືບໍ່.

ຖ້າທ່ານສ່ຽງຕໍ່ການຕິດເຊື້ອ, ທ່ານກໍຕ້ອງໄດ້ໄປສັກຢາຊຸດກັນພຍາດວໍ້ແລະຢາ rabies immunoglobulin. ໃນຣັດ NSW, ທ່ານຈະໄດ້ຮັບການສັກຢາກັນໂຣກຫຼັງຖືກກັດ ໄດ້ຟຣີຈາກທ່ານໝໍໂດຍຜ່ານຜແນກອະນາມັຍສາທາຣະນະ.

ຫຼັງຈາກຖືກກັດຫຼືຄູດຈາກສັດລ້ຽງລູກດ້ວຍນ້ຳນົມທີ່ມີເຊື້ອ ທ່ານຍັງຕ້ອງໄດ້ສັກຢາກັນໂຣກຕື່ມອີກ, ເຖິງແມ່ນວ່າທ່ານໄດ້ສັກມາກ່ອນແລ້ວກໍຕາມ. ຢ່າງໃດກໍດີ, ທ່ານພຽງແຕ່ຕ້ອງສັກເພີ້ມເທົ່ານັ້ນ. ຖ້າທ່ານເຫັນເຈ້ຍບາດເຈັບຫຼືມີອາການຫງ່ວມເຫງົາ, ຢ່າພຍາຍາມໄປຈັບຕ້ອງໂດຍຕົວທ່ານເອງ, ແຕ່ໃຫ້ເອີ້ນໜ່ວຍກູ້ພັຍຊີວິດສັດປ່າໃນເຂດທ້ອງຖິ່ນ.

## ຣາຍລະອຽດເພີ້ມເຕີມ - ຜແນກສາທາຣະນະສຸກແຫ່ງຣັດ NSW



**1300 066 055** [www.health.nsw.gov.au](http://www.health.nsw.gov.au)